# ປະກັນການຫວ່າງງານແມ່ນຫຍັງ

ປະກັນການຫວ່າງງານ (UI) ແມ່ນໂຄງການຊ່ວຍເຫຼືອເງິນຊົ່ວຄາວສໍາລັບຜູ້ອອກແຮງງານຢູ່ລັດແມດສະຈູແຊດ (Massachusetts) ທີ່ຖືກສູນເສຍວຽກເຮັດໂດຍບໍ່ແມ່ນເກີດຈາກຄວາມຜິດຂອງເຂົາເຈົ້າເອງ, ແລະ:

- ສາມາດເຮັດວຽກໄດ້
- ພ້ອມເຮັດວຽກ, ແລະ
- ກໍາລັງຊອກວຽກເຮັດຢ່າງຈິງຈັງ

ທຶນສໍາລັບເງິນຊ່ວຍເຫຼືອການຫວ່າງງານແມ່ນມາຈາກເງິນປະກອບສ່ວນປະຈໍາໄຕມາດຈ່າຍໂດຍຜູ້ໃຊ້ແຮງງານພາຍໃນລັດໃຫ້ກັບພະແນກຊ່ວຍເຫຼືອການຫວ່າງງານ (DUA). ຜູ້ອອກແຮງງານບໍ່ໄດ້ມີສ່ວນປະກອບໃດໆສໍາລັບເງິນທຶນປະກັນການຫວ່າງງານ.

# ທ່ານຄວນຍື່ນຂໍເອົາເງິນຊ່ວຍເຫຼືອ UI ເວລາໃດ?

ຖ້າທ່ານຖືກເລີກຈ້າງຫຼືຊົ່ວໂມງເຮັດວຽກຂອງທ່ານຫຼຸດລົງ, ທ່ານຄວນສະໝັກຂໍເງິນຊ່ວຍເຫຼືອ UI ໃນ**ລະຫວ່າງອາທິດທໍາອິດ**ຂອງການຫວ່າງງານບໍ່ວ່າເຕັມເວລາຫຼືບໍ່ເຕັມເວລາ. ການຮ້ອງຂໍຂອງທ່ານຈະເລີ່ມໃນວັນທິດຂອງອາທິດຕາມປະຕິທິນທີ່ທ່ານຍື່ນການຮ້ອງຂໍ. ວັນທີນີ້ເອີ້ນວ່າວັນທີການຮ້ອງຂໍມີຜົນນໍາໃຊ້.

ທ່ານຈະບໍ່ໄດ້ຮັບເງິນຊ່ວຍເຫຼືອການຫວ່າງງານສໍາລັບອາທິດກ່ອນວັນທີການຮ້ອງຂໍມີຜົນນໍາໃຊ້ຂອງການຮ້ອງຂໍຂອງທ່ານ.

**ໝາຍເຫດທີ່ສໍາຄັນ:**
ທ່ານສາມາດຂໍເງິນຊ່ວຍເຫຼືອຖ້າທ່ານຢູ່ໃນສະຫະລັດ, ເຂດດິນແດນຂອງສະຫະລັດຫຼືການາດາ, ທ່ານບໍ່ຄວນຂໍເງິນຊ່ວຍເຫຼືອສໍາລັບອາທິດໃດໆທີ່ທ່ານອອກນອກສະຫະລັດ, ເຂດດິນແດນສະຫະລັດຫຼືການາດາ

This pamphlet includes important information on how to apply for Unemployment Insurance benefits.

Este folleto contiene información importante sobre cómo solicitar los beneficios del Seguro de Desempleo.

Este panfleto contém informações importantes sobre como registrar-se para receber benefícios de subsídio de desemprego.

Данный проспект содержит важную информацию о процессе подачи заявления на получение Страхового пособия по безработице.

Livrè sa gen enfòmasyon enpòtan sou fason pou aplike pou Benefis Asirans Chomaj yo.

Il presente opuscolo contiene importanti informazioni riguardanti la modalità di richiesta per l'indennità di disoccupazione.

Cette brochure comporte d'importants renseignements sur la façon de demander des prestations d'assurance-chômage.

សៀវភៅផ្សព្វផ្សាយនេះមានរួមជាមួយនឹងព័ត៌មានសំខាន់ អំពី របៀបដាក់ពាក្យសុំប្រាក់អត្ថប្រយោជន៍ការធានារ៉ាប់រងការគ្មានការងារ។

**Cuốn sách mỏng này bao gồm thông tin quan trọng về cách nộp đơn xin bảo hiểm thất nghiệp**

ແຜ່ນເຈ້ຍນີ້ມີຂໍ້ມູນກ່ຽວກັບວິທີການຂໍເອົາເງິນຜົນປະໂຫຍດປະກັນໄພຫວ່າງງານ.

这本小册子包括如何申请失业保险金的重要信息.

이 팜플렛에는 실업 보험 급여의 신청 방법에 대한 중요한 정보가 들어 있습니다.

يحتوي هذا الكتيب على معلومات هامة حول كيفية التقديم للحصول على منافع تأمين البطالة.

**ໂຄງການຜູ້ໃຊ້ແຮງງານທີ່ໃຫ້ໂອກາດເທົ່າທຽມກັນ**
ການຊ່ວຍເຫຼືອເສີມແລະການບໍລິການພິເສດແມ່ນມີໃຫ້ບໍລິການຕາມຄໍາຮ້ອງຂໍສໍາລັບບຸກຄົນພິການ. ສໍາລັບການບໍລິການສະເພາະບຸກຄົນພິການທາງຫູ, ໃຫ້ໂທຫາ 711.

THE COMMONWEALTH OF MASSACHUSETTS
EXECUTIVE OFFICE OF LABOR AND WORKFORCE DEVELOPMENT
DEPARTMENT OF UNEMPLOYMENT ASSISTANCE

Form 0590-A Rev. 6-17 Laotian

THE COMMONWEALTH OF MASSACHUSETTS
EXECUTIVE OFFICE OF LABOR AND WORKFORCE DEVELOPMENT
DEPARTMENT OF UNEMPLOYMENT ASSISTANCE

## ເຖິງຜູ້ອອກແຮງງານໃນລັດແມດສະຈູແຊດ:

# ວິທີຍື່ນການຮ້ອງຂໍເງິນປະກັນການຫວ່າງງານ

## ເຖິງຜູ້ໃຊ້ແຮງງານໃນລັດແມດສະຈູແຊດ:

ອີງຕາມກົດໝາຍການຫວ່າງງານແລະຝຶກອົບຮົມປະຈໍາລັດ, M.G.L ມາດຕາ 151A, ທ່ານຕ້ອງໄດ້ສະໜ້ອງສໍາເນົາປຶ້ມແນະນໍານີ້ທັນທີທັນໃດທີ່ເປັນໄປໄດ້, ບໍ່ໃຫ້ເກີນ 30 ມື້ຈາກມື້ສຸດທ້າຍຂອງການເຮັດວຽກຂອງຜູ້ອອກແຮງງານ. ທ່ານຕ້ອງໄດ້ສະໜອງປຶ້ມແນະນໍານີ້ໃຫ້ກັບຜູ້ອອກແຮງງານຂອງທ່ານທຸກຄົນທີ່ຖືກເລີກຈ້າງແຮງງານຢ່າງຖາວອນຫຼືຊົ່ວຄາວ. ກະລຸນາປະກອບຂໍ້ມູນຂ້າງລຸ່ມ:

________________________________
ຊື່ ຜູ້ໃຊ້ແຮງງານ

________________________________
ທີ່ຢູ່

________________________________
ເລກໂທລະສັບ

________________________________
ລະຫັດປະຈໍາຕົວຜູ້ໃຊ້ແຮງງານ (EIN)



# ສະໝັກອອນລາຍ

ວິທີຍື່ນການຮ້ອງຂໍ UI ຫຼື ເປີດການຮ້ອງຂໍຄືນໃໝ່ ທາງອອນລາຍ, ເຂົ້າໄປເວັບໄຊຂອງພວກເຮົາທີ່: **www.mass.gov/dua**.

1. ເລືອກເອົາ **UI Online** ສໍາລັບຜູ້ຮ້ອງຂໍ.
2. ເລືອກ **Apply for Benefits.**
3. ສ້າງບັນຊີ UI Online ຫຼື ລອກອິນເພື່ອເຂົ້າຫາບັນຊີທີ່ສ້າງໄວ້ແລ້ວ.
4. ປະກອບທຸກຂໍ້ມູນຕາມການຮ້ອງຂໍແລະກົດສົ່ງໃບສະໝັກຮ້ອງຂໍຂອງທ່ານ.
5. ຢ່າລືມປະກອບເລກໂທລະສັບແລະທີ່ຢູ່ອີເມວ ເພື່ອມີຄໍາຖາມຫຍັງກ່ຽວກັບໃບສະໝັກຂອງທ່ານພວກເຮົາຈະໄດ້ຕິດຕໍ່ຫາທ່ານສະດວກຂຶ້ນ.

**UI Online ເປີດໃຊ້ບໍລິການ 5:00 ໂມງເຊົ້າຫາ 10:00 ກາງຄືນ, 7 ມື້ຕໍ່ອາທິດ.**

## ຕ້ອງການຊ່ວຍເຫຼືອ?

ຖ້າທ່ານມີຄໍາຖາມຫຍັງກ່ຽວກັບສິດທີໄດ້ຮັບຂອງທ່ານ ຫຼືຕ້ອງການຊ່ວຍເຫຼືອໃນການຍື່ນການຮ້ອງຂໍ, ກະລຸນາອ່ານເບິ່ງໃນບົດຄໍາຖາມທີ່ມັກຖາມຫຼືນັດໝາຍການໂທກັບຈາກສູນ TeleClaim ໃນເວັບໄຊຂອງພວກເຮົາທີ່: **www.mass.gov/dua**.

# ຂໍ້ມູນທີ່ຕ້ອງການເພື່ອຍື່ນການຮ້ອງຂໍ

ວິທີສະໝັກຮ້ອງຂໍເງິນຊ່ວຍເຫຼືອການຫວ່າງງານ, ທ່ານຕ້ອງການສະໜອງຂໍ້ມູນສ່ວນຕົວເຊັ່ນ, ລະຫັດປະກັນສັງຄົມ, ວັນເດືອນປີເກີດ, ທີ່ຢູ່ເຮືອນ, ອີເມວ, ແລະເລກໂທລະສັບ.

ທ່ານຍັງຕ້ອງໄດ້ສະໜອງຂໍ້ມູນກ່ຽວກັບປະຫວັດເຮັດວຽກຂອງທ່ານພາຍໃນ 15 ເດືອນຜ່ານມາ, ປະກອບດ້ວຍ:

- ຊື່ຂອງຜູ້ໃຊ້ແຮງງານທຸກຄົນ, ພ້ອມດ້ວຍທີ່ຢູ່ແລະເລກໂທລະສັບ.
- ສາເຫດທີ່ຖືກເລີກຈ້າງຈາກວຽກດັ່ງກ່າວ
- ວັນທີຖືກຈ້າງເຮັດວຽກ ແລະ ວັນທີເລີກຈ້າງ.
- ວັນທີຮ້ອງເຮັດວຽກຄືນ (ຖ້າທ່ານຖືກເລີກຈ້າງຊົ່ວຄາວທີ່ມີກໍານົດມື້ກັບຄືນໄປເຮັດວຽກຄືນ)

ທ່ານອາດຕ້ອງການຂໍ້ມູນເພີ່ມເຕີມໃນບາງກໍລະນີເຊັ່ນ:

- ຖ້າທ່ານບໍ່ແມ່ນສັນຊາດສະຫະລັດອະເມຣິກາ — ທ່ານຕ້ອງມີບັດຂຽວ ຫຼື ໃບຢັ້ງຢືນອະນຸຍາດໃຫ້ທ່ານເຮັດວຽກຢູ່ ສະຫະລັດໄດ້ຢ່າງຖືກຕ້ອງຕາມກົດໝາຍ.
- ຖ້າທ່ານມີເດັກທີ່ເພິ່ງພາອາໄສ — ວັນເດືອນປີເກີດຂອງເຂົາເຈົ້າ ແລະລະຫັດປະກັນສັງຄົມ
- ຖ້າທ່ານເປັນສະມາຊິກກໍາມະບານ — ຊື່ກໍາມະບານແລະເລກປະຈໍາທ້ອງຖິ່ນ
- ຖ້າທ່ານເຄີຍເປັນທະຫານ — ຟອມ DD-214 Member 4. ຖ້າທ່ານບໍ່ມີ, ທ່ານສາມາດຍື່ນຂໍເອົາຟອມ DD-214 ຂອງທ່ານໄດ້ຈາກອອນລາຍທີ່ www.dd214.us.

ວິທີຮັບເງິນໂດຍການໂອນເຂົ້າບັນຊີໂດຍກົງ, ທ່ານຈະຕ້ອງມີຊື່ທະນາຄານ, ເລກບັນຊີ ແລະ ເລັກ routing. ຖ້າບໍ່ມີ, ທາງພະແນກຫວ່າງງານຈະສົ່ງບັດເດບິດກາດໃຫ້ທ່ານໃຊ້.



# ສະໝັກທາງໂທລະສັບ

ວິທີຍື່ນການຮ້ອງຂໍ UI ຫຼືເປີດການຮ້ອງຂໍຄືນໃໝ່ທາງໂທລະສັບ, ທ່ານສາມາດ:

- ນັດໝາຍການໂທກັບຈາກສູນTeleClaim ໂດຍເຂົ້າໄປເວັບໄຊຂອງພວກເຮົາທີ່: **www.mass.gov/dua** ແລະເລືອກເອົາ ການບໍລິການທາງໂທລະສັບ Telephone Services.
- ໂທຫາສູນ TeleClaim ທີ່ (617) 626-6800 ຫຼື ໂທຟຣີ ທີ່ (877) 626-6800. ກະລຸນາໃຫ້ໂທຕາມຕາຕະລາງຂ້າງລຸ່ມ.

**ສູນ TeleClaim ເປີດໃຊ້ບໍລິການແຕ່ 8:30 ໂມງເຊົ້າ ຫາ 4:30 ໂມງແລງ, ວັນຈັນ ເຖິງວັນສຸກ.**

| Số An sinh xã hội cuối cùng : | Ngày xin gọi và: |
|---|---|
| 0, 1 | Thứ Hai |
| 2, 3 | Thứ Ba |
| 4, 5, 6 | Thứ Tư |
| 7, 8, 9ay | Thứ Năm |
| Bất kỳ số nào | Thứ Sáu |